ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງບໍລິຄຳໄຊ
ພະແນກ ໂຍທາທິການ ແລະ ຂົນສົ່ງ

ເລກທີ ..1.647.. /ຍທຂ.
ບໍລິຄຳໄຊ, ວັນທີ 13 ເມສາ 2026

# ໜັງສືແຈ້ງເຊີນປະມູນ

ເຖິງ: ບັນດາ ບໍລິສັດ ທີ່ມີຄວາມສົນໃຈເຂົ້າຮ່ວມປະມູນໃນການຕິດຕາມກວດກາເປັນທີ່ປຶກສາຂອງໂຄງການກໍ່ສ້າງປ້ອງກັນຕາຝັ່ງເຈື່ອນແບບລຽນຫີນແຄມນ້ຳຂອງ ບ້ານຊອດ ເມືອງປາກກະດິງ ແຂວງບໍລິຄຳໄຊ ມີຄວາມຍາວ 1.000 ແມັດ.

- ອີງຕາມ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງລົງທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017;
- ອີງຕາມ ຂໍ້ຕົກລົງຂອງເຈົ້າແຂວງບໍລິຄຳໄຊ ສະບັບເລກທີ 103/ຂບຊ, ລົງວັນທີ 11 ມີນາ 2026, ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບໂຄງການລົງທຶນຂອງລັດ ຂະແໜງທາງນ້ຳ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄຳໄຊ;
- ອີງຕາມ ໜັງສືແຈ້ງແຜນການລົງທຶນຂອງລັດ ປະຈຳປີ 2026 ຂອງປະທານຄະນະກຳມະການປົກຄອງແຂວງ ສະບັບເລກທີ 07/ຄປຂ, ລົງວັນທີ 27 ມີນາ 2026 (ຄັ້ງທີ 2);

**ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄຳໄຊ** ຂໍຖືເປັນກຽດຮຽນເຊີນ: ບັນດາບໍລິສັດ, ລັດວິສາຫະກິດທີ່ດຳເນີນທຸລະກິດຫົວໜ່ວຍພາກລັດ ແລະ ເອກະຊົນ ທີ່ມີຄວາມສົນໃຈໃນການຕິດຕາມກວດກາໂຄງການເປັນທີ່ປຶກສາໂຄງການກໍ່ສ້າງປ້ອງກັນຕາຝັ່ງເຈື່ອນ ແຄມນ້ຳຂອງ ແບບລຽນຫີນ ບ້ານຊອດ ເມືອງປາກກະດິງ, ແຂວງ ບໍລິຄຳໄຊ ສຳລັບຜູ້ເຂົ້າຮ່ວມປະມູນຕ້ອງມີເງື່ອນໄຂດັ່ງລຸ່ມນີ້:

1. ບໍລິສັດຕ້ອງມີປະສົບການດ້ານທີ່ປຶກສາໂຄງການກໍ່ສ້າງປ້ອງກັນຕາຝັ່ງ ຫຼື ຄ້າຍຄືຢ່າງນ້ອຍ 3 ປີຂຶ້ນໄປ;
2. ບໍລິສັດມີອຸປະກອນຮັບໃຊ້ກ່ຽວກັບການກວດກາຄຸນນະພາບ ແລະ ບໍລິມາດວຽກຄົບຊຸດ;
3. ມີບຸກຂະລາກອນທີ່ມີປະສົບການ 3 ປີຂຶ້ນໄປ ຊຳນານງານກ່ຽວກັບການຄວບຄຸມບໍລິມາດການກໍ່ສ້າງປ້ອງກັນຕາຝັ່ງ;
4. ບໍລິສັດ ຕ້ອງມີພາຫານະຮັບໃຊ້, ນ້ຳມັນເຊື້ອໄຟ, ເຄື່ອງໃຊ້ຫ້ອງການ ແລະ ສິ້ນເປືອງຕ່າງໆເປັນຂອງຕົນເອງ;
5. ບໍລິສັດ ທີ່ມີຄວາມສົນໃຈສາມາດຕິດຕໍ່ພົວພັນເອົາຂໍ້ມູນກ່ຽວກັບການສະເໜີການບໍລິການທີ່ປຶກສາ ດັ່ງກ່າວນີ້

ຢູ່ທີ່ ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ, ຂະແໜງທາງນໍ້າ ແລະ ຂະແໜງຈັດຊື້-ຈັດຈ້າງ ພະແນກການເງິນແຂວງ ຕາມໂມງລັດຖະການ 08:00 ໂມງ ຫາ 12:00 ແລະ 13:00 ແລະ 16:00 ໂມງ, ວັນຈັນ ເຖິງ ວັນສຸກ;

6. ເລີ່ມຂາຍຊອງປະມູນວັນທີ່ 13 ເມສາ ຫາ 25 ພຶດສະພາ 2026;
7. ມື້ເປີດຊອງປະມູນຈະໄດ້ຈັດຂຶ້ນໃນ ເວລາ 9:00 ໂມງ, ຂອງວັນທີ່. 26 ພຶດສະພາ 2026 ທີ່ຫ້ອງປະຊຸມ ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ ບໍລິຄໍາໄຊ, ສໍາລັບຊອງປະມູນຈະຕ້ອງຍື່ນເຖິງພະແນກໂຍທາທິການ ແລະ ຂົນສົ່ງ ເວລາ 8:30 ໂມງ, ຖ້າຊອງປະມູນໃດຫາກສົ່ງຊ້າກ່ວາເວລາທີ່ກໍານົດໄວ້ ແມ່ນຈະໄດ້ຖືກສົ່ງກັບ ແລະ ບໍ່ມີການເປີດຊອງດັ່ງກ່າວ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານຮັບຊາບ ແລະ ເຂົ້າຮ່ວມການຄັດເລືອກຄຸນນະວຸດທິຕາມແຈ້ງການດັ່ງກ່າວນີ້ດ້ວຍ.

ຫົວໜ້າພະແນກ

ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄໍາໄຊ

ທອງລິດ ພອງສີນວນ

ເບີໂທຕິດຕໍ່:

ທ່ານ ວົງເດືອນ ກິ່ງກິດຕິສັກ 020 55269283 ຂະແໜງທາງນໍ້າ ພະແນກ ຍທຂ ແຂວງ

ທ່ານ ຄໍາປະເສີດ ພັນນະວົງ 020 28870055 ຂະແໜງການຈັດຊື້-ຈັດຈ້າງ ພະແນກການເງິນ ແຂວງ